# ໄພແຫ້ງແລ້ງສືບຕໍ່ກະທົບປະເທດແມ່ນໍ້າຂອງ ສ່ຽງຕໍ່ກັບການຜະລິດຜົນລະປູກ ແລະ ການຂາດແຄນນໍ້າ

**ນະຄອນຫລວງວຽງຈັນ, ສປປ ລາວ, 19 ພະຈິກ 2019** – ຄະນະກໍາມາທິການແມ່ນໍ້າຂອງສາກົນ (ຄມສ) ເຕືອນ ປະເທດໃນອ່າງແມ່ນໍ້າຂອງຕອນລຸ່ມອາດຈະປະເຊີນໄພແຫ້ງແລ້ງຮຸນແຮງ ເຖິງ ຮຸນແຮງຫລາຍ ຕັ້ງແຕ່ໄລຍະນີ້ ໄປຈົນເຖິງເດືອນມັງກອນ ປີ 2020. ປະເທດໄທ ແລະ ກໍາປູເຈຍຈະໄດ້ຮັບຜົນກະທົບຫນັກກວ່າ ສປປ ລາວ ແລະ ຫວຽດນາມ.

ການວິເຄາະເບື້ອງຕົ້ນຕາມຂໍ້ມູນຂອງ ຄມສ ຊີ້ໃຫ້ເຫັນວ່າ ໄພແຫ້ງແລ້ງເກີດຈາກຝົນທີ່ຕົກຢ່າງບໍ່ພຽງພໍໃນລະດູຝົນ ພ້ອມກັບຝົນມໍລະສຸມທີ່ຕົກຊ້າ ແລະ ຢຸດຕົກໄວກວ່າປົກກະຕິ ແລະ ສະພາວະແອວນິນໂຍທີ່ເຮັດໃຫ້ເກີດອຸນຫະພູມສູງ ແລະ ການລະເຫີຍອາຍສູງ.

ຕາມປົກກະຕິໃນແຕ່ລະປີ ຝົນມໍລະສຸມເລີ່ມຕົກຕັ້ງແຕ່ທ້າຍເດືອນພຶດສະພາ ຈົນເຖິງ ເດືອນຕຸລາ ແຕ່ວ່າ ໃນປີນີ້ ຝົນມໍລະສຸມດັ່ງກ່າວໄດ້ເລີ່ມຕົກຊ້າ ສອງອາທິດ ແລະ ເຊົາຕົກໄວກ່ອນກໍານົດສາມອາທິດ

ດຣ ລໍາ ຮຸງ ຊັນ, ຫົວຫນ້າສູນຄຸ້ມຄອງໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງພາກພື້ນ ເຊິ່ງເປັນຫົວຫນ້າການວິເຄາະດັ່ງກ່າວ ໄດ້ກ່າວວ່າ: "ສະພາວະອາກາດແຫ້ງແລ້ງຍາວນານໃນປີນີ້ອາດຈະສົ່ງຜົນກະທົບຕໍ່ການຜະລິດກະສິກໍາ ແລະ ຜົນລະປູກ. ຖ້າການແຫ້ງແລ້ງດັ່ງກ່າວຍັງສືບຕໍ່ ບັນຫາການຂາດແຄນນໍ້າໃຊ້ອາດຈະເກີດຂຶ້ນ"

ໂດຍວິເຄາະສະພາບສາມເດືອນໃນຕໍ່ຫນ້າ, ການວິເຄາະໄດ້ເບິ່ງທັງຄວາມເປັນໄປໄດ້ ແລະ ລະດັບການເກີດໄພແຫ້ງແລ້ງ ແລະ ປະລິມານຝົນຕົກ ໂດຍປຽບທຽບກັບຂໍ້ມູນທີ່ມີມາກ່ອນນີ້ ເອີ້ນວ່າ ດັດຊະນີປະລິມານນໍ້າຝົນມາດຕະຖານ (standardized precipitation index), ລະດັບຄວາມແຫ້ງແລ້ງຂອງຫນ້າດິນຊັ້ນເທິງ ຫຼື ເອີ້ນວ່າ ດັດຊະນີຄວາມແຫ້ງແລ້ງລວມ (combined drought index) ໃນສີ່ປະເທດສະມາຊິກອົງການແມ່ນໍ້າຂອງ: ສປປ ລາວ, ກໍາປູເຈຍ, ໄທ ແລະ ຫວຽດນາມ

ຜົນຂອງການຄົ້ນຄວ້າສະແດງໃຫ້ເຫັນວ່າອ່າງແມ່ນໍ້າຂອງຕອນລຸ່ມຈະປະເຊີນກັບ ໄພແຫ້ງແລ້ງຈາກສະພາບອາກາດ ກໍຄື ສະພາບທີ່ອາກາດແຫ້ງແລ້ງປົກຄຸມພາກສ່ວນໃດຫນຶ່ງໃນຊ່ວງເວລາໃດຫນຶ່ງ ແລະ ໄພແຫ້ງແລ້ງກະສິກໍາ ກໍຄື ສະພາບທີ່ຜົນລະປູກອາດໄດ້ຮັບຜົນກະທົບ.

ໃນໄລຍະອາທິດທີ ສາມ ແລະ ສີ່ ຂອງເດືອນພະຈິກ, ພື້ນທີ່ສ່ວນໃຫຍ່ຂອງອ່າງແມ່ນໍ້າຂອງຕອນລຸ່ມຈະໄດ້ຮັບຜົນກະທົບ. ສະພາບແຫ້ງແລ້ງຄາດວ່າຈະເພີ່ມທະວີຫນັກຂຶ້ນຕອນເດືອນທັນວາ ຫາ ຕົ້ນເດືອນມັງກອນ 2020, ພື້ນທີ່ສ່ວນໃຫ່ຍຂອງອ່າງຈະມີຝົນຫນ້ອຍຫຼືບໍ່ມີເລີຍ. ທາງພາກເຫນືອ ແລະ ພາກຕາເວັນອອກສ່ຽງເຫນືອຂອງໄທປະກອບດ້ວຍ ຊຽງໃຫມ່, ເລີຍ, ຫນອງບົວລໍາພູ, ອຸດອນທານີ, ຂອນແກ່ນ, ໄຊຍະພູມ, ສະກົນນະຄອນ, ນະຄອນລາດຊະສີມາ, ບຸລີລໍາ, ມະຫາສາລະຄາມ, ສຸລິນ ແລະ ສີສະເກດ ແລະ ພາກຕາເວັນອອກສ່ຽງເຫນືອຂອງກໍາປູເຈຍ ລວມມີ ອຸດໍ ມຽນເຈຍ, ເພຍ ວິເຫຍ ແລະ ສຽມລຽບ ຈະໄດ້ຮັບຜົນກະທົບຫນັກສຸດ.

ບາງພື້ນທີ່ຂອງພາກກາງ ແລະ ພາກເຫນືອຂອງ ສປປ ລາວ ລວມມີ ແຂວງວຽງຈັນ, ແຂວງໄຊສົມບຸນ, ໄຊຍະບູລີ ແລະ ຫລວງພະບາງ ກໍ່ອາດຈະໄດ້ຮັບຜົນກະທົບປານກາງ. ເຖິງວ່າຈະບໍ່ມີລາຍງານໄພແຫ້ງແລ້ງໃນສາມລ່ຽມແມ່ນໍ້າຂອງຢູ່ຫວຽດນາມກໍຕາມ ພື້ນທີ່ດັ່ງກ່າວກໍ່ອາດໄດ້ຮັບຜົນກະທົບຈາກການກັດເຊາະຂອງນໍ້າເຄັມເຊິ່ງອາດທໍາລາຍການກະສິກໍາ.

ຕາມຄວາມຈິງແລ້ວ ໃນປີ 2019 ໄພແຫ້ງແລ້ງໄດ້ເຮັດໃຫ້ລະດັບແມ່ນ້ຳຂອງຢູ່ໃນລະດັບຕ່ຳສຸດໃນຮອບ 60 ປີ. ພື້ນທີ່ສ່ວນໃຫຍ່ຂອງອ່າງໄດ້ປະສົບກັບບັນຫາການໄຫລຂອງນ້ຳຕ່ຳ ຕັ້ງແຕ່ເດືອນມິຖຸນາ ເປັນຕົ້ນມາ.

ເຖິງຢ່າງໃດກໍຕາມ, ສະພາບໄພແຫ້ງແລ້ງຈະຄ່ອຍໆດີຂຶ້ນເລີ່ມແຕ່ອາທິດທີສອງຂອງເດືອນມັງກອນຕາມສະພາບອາກາດທີ່ຄາດວ່າຈະຊຸ່ມຊື່ນຂຶ້ນເທື່ອລະຫນ້ອຍ.

ອາທິດຫນ້ານີ້ ສະພາ ຄມຂ ເຊິ່ງແມ່ນອົງການຈັດຕັ້ງຂັ້ນສູງສຸດຂອງ ຄມຂ ກໍຄືລະດັບລັດຖະມົນຕີ ຈະພົບປະກັນ ແລະ ປຶກສາຫາລືກ່ຽວກັບບັນຫາໄພແຫ້ງແລ້ງດັ່ງກ່າວໃນກອງປະຊຸມປະຈຳປີທີ່ນະຄອນຫລວງພະນົມເປັນ. ສະພາດັ່ງກ່າວຄາດວ່າຈະຮັບຮອງເອົາຍຸດທະສາດຄຸ້ມຄອງໄພແຫ້ງແລ້ງເພື່ອເປັນສ່ວນຫນຶ່ງຂອງພະຍາຍາມຢ່າງຕໍ່ເນື່ອງ ເພື່ອເສີມສ້າງມາດຕະການຫລຸດຜ່ອນ, ການແບ່ງປັນຂໍ້ມູນ ແລະ ກົນໄກເຜີຍແຜ່ ໄພແຫ້ງແລ້ງ.

ໃນອາທິດຊິມານີ້ ຄມຂ ແລະ ສູນຮ່ວມມືຊັບພະຍາກອນນ້ຳລານຊ່າງ ຈະລິເລີ່ມການກະກຽມທີ່ຈຳເປັນເພື່ອຮ່ວມກັນສຶກສາສະພາບແຫ້ງແລ້ງດັ່ງກ່າວນີ້. ການສຶກສາດັ່ງກ່າວມີຈຸດປະສົງເພື່ອໃຫ້ຄຳແນະນຳຕ່າງໆໃນວຽກງານການຊຸກຍູ້ແບ່ງປັນຂໍ້ມູນ, ການສື່ສານ ແລະ ການປະສານດຳເນີນງານຂອງອ່າງເກັບນ້ຳ ໃຫ້ດີຂຶ້ນກວ່າເກົ່າ.

**ຫມາຍເຫດ:**

ຄມຂ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ , ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**

ທ່ານ ໂສພຽກ ແມ, ເຈົ້າຫນ້າທີ່ ການ ຂ່າວສື່ສານ, ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ

ອີເມວ: sopheak@mrcmekong.org ໂທລະສັບມືຖື : +856-20-77779168

###